This translation is out of date. You are encouraged to distribute the up-to-date English-language version at the same time as the outdated translation.
To access descriptions of changes of outdated VISs, go to **www.immunize.org/vis**.

# ຢາວັກຊີນປ້ອງກັນພະຍາດປອດບວມ

## ສິ່ງທີ່ທ່ານຄວນຮູ້

## 1 ເປັນຫຍັງຈຶ່ງຕ້ອງສັກຢາວັກຊີນ?

ການຕິດເຊື້ອ *ແບກທີເຣັຍໃນປອດ* ກໍ່ໃຫ້ເກີດອາການປ່ວຍທີ່ຮ້າຍແຮງ ແລະເສັຍຊີວິດໄດ້. ການແຜ່ພາຍຂອງພະຍາດປອດບວມເປັນສາເຫດເຮັດໃຫ້ຄົນເສັຍຊີວິດປະມານ 200 ຄົນໃນແຕ່ລະປີໃນນວນຫມູ່ເດັກນ້ອຍທີ່ ອາຍຸຕ່ຳກວ່າ 5 ປີ. ໃນສະຫະລັດອາເມລິກາພະຍາດນີ້ຍັງເປັນຕົ້ນເຫດຂອງການເຮັດໃຫ້ເຍື່ອສະຫມອງອັກເສບ. (ສະຫມອງອັກເສບແມ່ນການຕິດເຊື້ອຂອງເຍື່ອຫຸ້ມສະຫມອງ) .

ໃນແຕ່ລະປີການຕິດເຊື້ອປອດບວມແມ່ນສາເຫດເຮັດໃຫ້ເກີດພະຍາດຮ້າຍແຮງໃນເດັກນ້ອຍທີ່ມີອາຍຸຕ່ຳກວ່າຫ້າປີ :

ມີ 700 ລາຍທີ່ມີອາການຂອງເຍື່ອສະຫມອງອັກເສບ,
13,000 ລາຍທີ່ຕິດເຊື້ອທາງເລືອດ, ແລະ
ປະມານ 5 ລ້ານລາຍທີ່ຕິດເຊື້ອທາງຫູ.

ມັນກໍ່ໃຫ້ເກີດບັນຫາສຸຂະພາບອື່ນໆ, ລວມເຖິງ :

ປອດອັກເສບ
ຫູຫນວກ
ສະຫມອງພິການ



ເດັກນ້ອຍອາຍຸຕ່ຳກວ່າ 2 ປີມີໂອກາດສ່ຽງຕໍ່ການເປັນພະຍາດຮ້າຍແຮງສູງທີ່ສຸດ.

ເຊື້ອແບກທີເຣັຍປອດສາມາດແຜ່ພາຍຈາກຜູ້ນຶ່ງໄປອີກຜູ້ນຶ່ງໄດ້ໂດຍຜ່ານທາງການສຳຜັດໃກ້ຊິດຕິດແທດ.

ການຕິດເຊື້ອໂຣກປອດແມ່ນຍາກທີ່ຈະຮັກສາໄດ້ເພາະວ່າເຊື້ອແບກທີເຣັຍຈະຕ້ານທານຢາທີ່ເຄີຍໃຊ້ຮັກສາ. ນີ້ແມ່ນສິ່ງທີ່ເຮັດໃຫ້**ການປ້ອງກັນ**ການຕິດເຊື້ອໂຣກປອດຍາກຂຶ້ນຫລາຍກວ່າເກົ່າ.

ວັກຊີນປ້ອງກັນພະຍາດປອດບວມສາມາດຊ່ວຍປ້ອງກັນພະຍາດປອດທີ່ຮ້າຍແຮງໄດ້, ເຊັ່ນການຕິດເຊື້ອໃນເຍື່ອສະຫມອງແລະເລືອດ ແລະຍັງສາມາດປ້ອງກັນການຕິດເຊື້ອທີ່ຫູໄດ້ອີກ. ແຕ່ວ່າການຕິດເຊື້ອທີ່ຫູອາດຈະເກີດຈາກສາເຫດຫລາຍຢ່າງ, ແລະວັກຊີນປ້ອງກັນປອດອັກເສບມີປະສິດທິພາບປ້ອງກັນໄດ້ບາງຢ່າງເທົ່ານັ້ນ.

## 2 ວັກຊີນປ້ອງກັນພະຍາດປອດບວມ

ວັກຊີນປ້ອງກັນພະຍາດປອດບວມໄດ້ຮັບອະນຸຍາດໃຫ້ໃຊ້ກັບເດັກທາລົກແລະເດັກນ້ອຍທີ່ພວມຫັດຍາງ. ການປ້ອງກັນມີຜົນຢ່າງນ້ອຍ 3 ປີ, ເພາະສະນັ້ນເດັກນ້ອຍທີ່ສັກວັກຊີນປ້ອງກັນຕັ້ງແຕ່ຍັງເປັນທາລົກຈະໄດ້ຮັບການປ້ອງກັນຈາກພະຍາດທີ່ຮ້າຍແຮງໄດ້ເມື່ອເຖິງເວລາທີ່ມີຄວາມສ່ຽງສູງຕໍ່ການຕິດເຊື້ອ.

ເດັກໃຫຍ່ບາງຄົນແລະຜູ້ໃຫຍ່ອາດຈະໄດ້ຮັບວັກຊີນທີ່ແຕກຕ່າງກັນທີ່ເອີ້ນວ່າວັກຊີນປ້ອງກັນພະຍາດປອດບວມທີ່ເຮັດມາຈາກແປ້ງ. ມີຂໍ້ມູນສະເພາະສຳລັບຄົນທີ່ຈຳເປັນຕ້ອງສັກວັກຊີນນີ້.

## 3 ໃຜຄວນສັກຢາປ້ອງກັນແລະຄວນສັກຢາປ້ອງກັນຍາມໃດ?

**ເດັກນ້ອຍອາຍຸຕ່ຳກວ່າ 2 ປີ**

ຕາລາງກຳນົດການສັກຢາປ້ອງກັນພະຍາດປອດບວມມີ 4 ຂະຫນານ, ແຕ່ລະຂະຫນານສຳລັບຊ່ວງອາຍຸດັ່ງຕໍ່ໄປນີ້ :

✓ **2** ເດືອນ ✓ **6** ເດືອນ
✓ **4** ເດືອນ ✓ **12-15** ເດືອນ

ເດັກນ້ອຍຜູ້ທີ່ບໍ່ໄດ້ສັກວັກຊີນໃນຊ່ວງອາຍຸດັ່ງກ່າວຍັງສາມາດໄປສັກວັກຊີນປ້ອງກັນພາຍຫລັງໄດ້. ຈຳນວນຂະຫນານຢາຂຶ້ນຢູ່ກັບອາຍຸຂອງເດັກຜູ້ນັ້ນ. ຈົ່ງຖາມ ເຈົ້າຫນ້າທີ່ໂຮງຫມໍເພື່ອຂໍລາຍລະອຽດເພີ່ມເຕີມ.

**ເດັກນ້ອຍທີ່ມີອາຍຸລະຫວ່າງ 2 ປີ ເຖິງ 5 ປີ**

ວັກຊີນປ້ອງກັນພະຍາດປອດບວມໄດ້ຮັບການແນະນຳໃຫ້ໃຊ້ກັບເດັກນ້ອຍທີ່ມີອາຍຸ ລະຫວ່າງ 2 ປີ ເຖິງ 5 ປີ
ທີ່ຍັງບໍ່ເຄີຍສັກວັກຊີນແລະມີການສ່ຽງສູງຕໍ່ການ ຕິດພະຍາດປອດບວມ.
ລວມເຖິງຄົນທີ່ :

- ເປັນພະຍາດເລືອດຈາງ,
- ມ້າມຖືກທຳລາຍ ຫລື ບໍ່ມີມ້າມ,
- ມີເຊື້ອເອຊ ໄອ ວີ/ເອດສ
- ມີພະຍາດອື່ນທີ່ສົ່ງຜົນກະທົບຕໍ່ຣະບົບພູມຕ້ານທານຂອງຮ່າງກາຍ, ເຊັ່ນເປັນພະຍາດເບົາຫວານ, ມະເຮັງ, ຫລື ຕັບ, ຫລື ຄົນທີ່
- ກິນຢາທີ່ມີຜົນກະທົບຕໍ່ຣະບົບພູມຄຸ້ມກັນຂອງຮ່າງກາຍ, ເຊັ່ນການຮັກສາດ້ວຍສານເຄມີ ຫລື ຢາສະເຕີລອຍ, ຫລື
- ເປັນພະຍາດຫົວໃຈເຮື້ອຮັງ ຫລື ເປັນພະຍາດປອດເຮື້ອຮັງ.

ຄວນລະມັດລະວັງໃນການໃຫ້ວັກຊີນກັບເດັກນ້ອຍທີ່ມີຄວາມສ່ຽງສູງຕໍ່ການເປັນພະຍາດປອດບວມ. ລວມເຖິງເດັກນ້ອຍທີ່ :

- ອາຍຸຕ່ຳກວ່າ 3 ປີ,
- ມີເຊື້ອສາຍມາຈາກຄົນພື້ນເມືອງຂອງລັດອາລາສະກາ, ອິນເດີຍນແດງ ຫລື ຄົນອາເມລິກັນຜິວດຳ, ຫລື
- ໄປເຊົ້າສູນເບິ່ງແຍງເດັກນ້ອຍ.

ປະລິມານຢາທີ່ຈະໃຊ້ຈະຂຶ້ນຢູ່ກັບອາຍຸຂອງເດັກນ້ອຍ. ຖາມເຈົ້າຫນ້າທີ່ໂຮງຫມໍຂອງທ່ານເພື່ອຂໍຂໍ້ມູນເພີ່ມເຕີມ.

ອາດສັກວັກຊີນປ້ອງກັນພະຍາດປອດບວມໄດ້ໃນເວລາດຽວກັນກັບການສັກວັກຊີນອື່ນໆ.

## 4 ເດັກນ້ອຍບາງຄົນບໍ່ຄວນສັກວັກຊີນປ້ອງກັນ ພະຍາດປອດບວມ ຫລື ຄວນລໍຖ້າໄປກ່ອນ

ເດັກນ້ອຍບາງຄົນບໍ່ຄວນສັກວັກຊີນປ້ອງກັນພະຍາດປອດບວມຖ້າມີອາການ ແພ້ (ສ່ຽງຊີວິດ) ຢ່າງຮ້າຍແຮງ ຕໍ່ວັກຊີນຂະໜານກ່ອນ, ຫລື ມີການແພ້ ຢ່າງຮ້າຍແຮງຕໍ່ຕົວຢາຢ່າງໃດຢ່າງນຶ່ງຂອງວັກຊີນ. ຖ້າຫາກວ່າລູກຂອງທ່ານ ເຄີຍມີອາການແພ້ວັກຊີນອື່ນໆຢ່າງຮ້າຍແຮງມາກ່ອນ, ຫລື ເຄີຍມີອາການ ແພ້ຮ້າຍແຮງ ກໍ່ຈົ່ງເວົ້າໃຫ້ເຈົ້າໜ້າທີ່ໂຮງໝໍຟັງ.

ເດັກນ້ອຍທີ່ມີອາການ ປ່ວຍເລັກນ້ອຍ, ເຊັ່ນ ເປັນຫວັດ, ອາດສັກວັກຊີນໃຫ້ໄດ້. ແຕ່ເດັກນ້ອຍ ທີ່ມີອາການປ່ວຍປານກາງ ຫລື ປ່ວຍໜັກ ໂດຍທົ່ວໄປແລ້ວ ຄວນລໍຖ້າ ຈົນກວ່າຈະເຊົາປ່ວຍເສັຍກ່ອນ ຈຶ່ງຄ່ອຍໃຫ້ສັກວັກຊີນ.

## 5 ວັກຊີນປ້ອງກັນພະຍາດປອດບວມມີ ອັນຕະລາຍຫຍັງແດ່?

ໃນການສຶກສາ (ເກືອບ 60,000 ຂະໜານ), ວັກຊີນປ້ອງກັນພະຍາດ ປອດບວມມີສ່ວນເຮັດໃຫ້ເກີດອາການແພ້ເລັກນ້ອຍເທົ່ານັ້ນ.

1 ໃນ 4 ຂອງເດັກທາລົກ ຈະມີອາການເປັນຜື່ນແດງ, ຊ້ຳ, ຫລື ບວມ ບໍລິເວນບ່ອນສັກຢາ.

1 ໃນ 3 ມີອາການໄຂ້ສູງກວ່າ 100.4 ອົງສາຟາເຣັນໄຮ, ແລະ 1 ໃນ 50 ມີໄຂ້ສູງ (ສູງກາຍ 102.2 ອົງສາຟາເຣັນໄຮ).

ເດັກນ້ອຍບາງຄົນອາດມີອາລົມບໍ່ດີ ຫລື ເຫງົາຊຶມ, ຫລື ເບື່ອອາຫານ.

ຈົນເຖິງຂະນະນີ້ ຍັງບໍ່ມີອາການຮ້າຍແຮງຫຍັງທີ່ເກີດຈາກວັກຊີນນີ້. ຢ່າງໃດກໍ່ຕາມ, ວັກຊີນ, ກໍ່ຄືກັນກັບຢາອື່ນໆ, ສາມາດເຮັດໃຫ້ເກີດບັນຫາ ຮ້າຍແຮງໄດ້, ເຊັ່ນ ການແພ້ຢ່າງຮ້າຍແຮງ. ຄວາມສ່ຽງຂອງວັກຊີນ ນີ້ທີ່ຈະເຮັດໃຫ້ເປັນອັນຕະລາຍຮ້າຍແຮງ, ຫລື ເສັຍຊີວິດນັ້ນ, ມີນ້ອຍທີ່ສຸດ.

## 6 ຈະເຮັດແນວໃດຖ້າມີອາການແພ້ປານກາງ ຫລືແພ້ຢ່າງຮ້າຍແຮງ?

**ຂ້າພະເຈົ້າຄວນສັງເກດເບິ່ງຈຸດໃດ?**

ກວດຫາອາການຜິດປົກກະຕິອື່ນໆ, ເຊັ່ນ ມີອາການແພ້ຢ່າງຮ້າຍແຮງ, ມີໄຂ້ສູງ, ຫລື ມີນິໄສຜິດປົກກະຕິ.

ອາການແພ້ຢ່າງຮ້າຍແຮງແມ່ນເກີດຂຶ້ນໄດ້ນ້ອຍທີ່ສຸດກັບວັກຊີນຕ່າງໆ. ຖ້າມີ, ອາການດັ່ງກ່າວກໍ່ມັກຈະເກີດຂຶ້ນພາຍໃນສອງສາມນາທີ ຈົນເຖິງ ສອງສາມຊົ່ວໂມງຫລັງຈາກສັກຢາ. ອາການທີ່ເກີດຂຶ້ນລວມເຖິງ:

- ຫາຍໃຈຍາກ
- ສຽງແຫບ ຫລື ຫອບ
- ລໍາຄໍບວມ
- ອ່ອນເພັຍ
- ຫົວໃຈເຕັ້ນໄວ
- ວິງວຽນ
- ເປັນຜື່ນແດງ
- ມ້ານຈືດ

**ຂ້າພະເຈົ້າຄວນເຮັດແນວໃດ?**

ໂທຫາທ່ານໝໍ ຫລື ພາຄົນຜູ້ນັ້ນໄປຫາທ່ານໝໍທັນທີ.

ເວົ້າໃຫ້ທ່ານໝໍຟັງເຖິງອາການທີ່ເກີດຂຶ້ນ, ວັນທີແລະເວລາທີ່ເກີດອາການ, ແລະສັກວັກຊີນຕັ້ງແຕ່ເມື່ອໃດ.

ຂໍໃຫ້ເຈົ້າໜ້າທີ່ໂຮງໝໍຂຽນລາຍງານອາການແພ້ວັກຊີນ(VAERS), ຫລື ໂທໄປທີ່ VAERS ດ້ວຍຕົວທ່ານເອງ ເລກໂທ **1-800-822-7967**.

## 7 ໂຄງການຈ່າຍຄ່າຊົດເຊີຍສໍາລັບການ ເສັຍຫາຍຈາກການສັກວັກຊີນ ແຫ່ງຊາດ

ໃນບາງກໍລະນີ ທ່ານຫລືລູກຂອງທ່ານມີອາການແພ້ຢາສັກປ້ອງກັນ ຢ່າງຮ້າຍແຮງ, ໂຄງການຂອງລັດໄດ້ຖືກຈັດຕັ້ງຂຶ້ນເພື່ອຊ່ວຍທ່ານຈ່າຍຄ່າປິ່ນປົວໃຫ້ກັບຜູ້ທີ່ໄດ້ຮັບ ຄວາມເສັຍຫາຍຈາກການສັກວັກຊີນປ້ອງກັນ.

ສໍາລັບລາຍລະອຽດກ່ຽວກັບໂຄງການຈ່າຍຄ່າຊົດເຊີຍເນື່ອງຈາກໄດ້ຮັບຄວາມເສັຍຫາຍຈາກການສັກວັກຊີນແຫ່ງຊາດ, ໃຫ້ສອບຖາມໄດ້ທີ່ເລກໂທ **1-800-338-2382** ຫລື ເບິ່ງເວັບໄຊຂອງໂຄງການທີ່ **http://www.hrsa.gov/bhpr/vicp**

## 8 ຂ້າພະເຈົ້າຈະຊອກຫາຂໍ້ມູນເພີ້ມເຕີມໄດ້ຢ່າງໃດ?

ຖາມເຈົ້າໜ້າທີ່ໂຮງໝໍຂອງທ່ານ. ພວກເພິ່ນສາມາດໃຫ້ປື້ມຄູ່ມື ກ່ຽວກັບວັກຊີນ ຫລື ແນະນໍາແຫລ່ງຂໍ້ມູນອື່ນໆໃຫ້ທ່ານໄດ້.

ໂທຫາພະແນກສາທາລະນະສຸກໃນເຂດທີ່ທ່ານອາໄສຢູ່ເພື່ອສອບຖາມ ກ່ຽວກັບໂຄງການການສັກຢາປ້ອງກັນພະຍາດ.

ຕິດຕໍ່ສູນຄວບຄຸມແລະປ້ອງກັນໂຣກ (CDC):

- ໂທ **1-800-232-2522** (ພາສາອັງກິດ)
- ໂທ **1-800-232-0233** (ພາສາສະເປນ)
- ເບິ່ງທີ່ເວັບໄຊຂອງໂຄງການສັກຢາປ້ອງກັນພະຍາດແຫ່ງຊາດ ທີ່ **http://www.cdc.gov/nip**

CDC
CENTERS FOR DISEASE CONTROL AND PREVENTION

**U.S. DEPARTMENT OF HEALTH & HUMAN SERVICES**
Centers for Disease Control and Prevention
National Immunization Program

Vaccine Information Statement - Laotian
Pneumococcal Conjugate Vaccine (7/9/01) 42 U.S.C. § 300aa-26

Translation provided by the Minnesota Department of Health